ອະນຸສັນຍາກຳນົດລາຍລະອຽດການຂົນສົ່ງທາງບົກ

ລະຫວ່າງ

ລັດຖະບານ ແຫ່ງ ສະທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ແລະ

ລັດຖະບານ ແຫ່ງ ລາຊະອານາຈັກໄທ

ລັດຖະບານ ແຫ່ງ ສາທາລະນາລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ແຫ່ງ ລາຊະອາ
ນາຈັກໄທ ( ຊຶ່ງຕໍ່ໄປນີ້ເອີ້ນວ່າ " ພາຄີ ຄູ່ສັນຍາ" );

ອີງໃສ່ສັນຍາວ່າດ້ວຍການຂົນສົ່ງທາງບົກ ລະຫວ່າງລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ
ປະຊາຊົນລາວ ແລະລັດຖະບານ ແຫ່ງ ລາຊະອານາຈັກໄທ ທີ່ໄດ້ເຊັນກັນທີ່ບາງກອກ ເມື່ອວັນທີ່ 5 ມີນາ 1999;

ອີງໃສ່ມາດຕາ 1 ຂອງ ສັນຍາດັ່ງກ່າວ ຊຶ່ງກຳນົດໃຫ້ ກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່
ສ້າງ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ກະຊວງຄົມມະນາຄົມ ແຫ່ງ ລາຊະອານາຈັກ
ໄທ ຈັດທຳອະນຸສັນຍາເພື່ອກຳນົດລາຍລະອຽດຂອງການຂົນຖ່າຍສິນຄ້າຂົນສົ່ງຜ່ານແດນລະຫວ່າງພາຄີຄູ່ສັນ
ຍາຊຶ່ງຖືເປັນສ່ວນນຶ່ງຂອງສັນຍາດັ່ງກ່າວ;

ອີງໃສ່ມາດຕາ 10 ຂອງສັນຍາດັ່ງກ່າວ ຊຶ່ງກຳນົດໃຫ້ເຈົ້າໜ້າທີ່ ທີ່ກ່ຽວຂ້ອງເຮັດອະນຸສັນຍາເພີ່ມເຕີມ
ອື່ນໆ ເພື່ອໃຫ້ເປັນໄປຕາມຈຸດປະສົງຂອງ ສັນຍາດັ່ງກ່າວ;

ປາດຖະໜາທີ່ຈະສົ່ງເສີມ ແລະ ອຳນວຍຄວາມສະດວກໃນການຂົນສົ່ງທາງບົກລະຫວ່າງປະເທດ;

ຕົກລົງເປັນເອກະພາບກັນວ່າການເຮັດອະນຸສັນຍາເພື່ອກຳນົດລາຍລະອຽດການຂົນສົ່ງທາງບົກ ລະ
ຫວ່າງລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ແຫ່ງ ລາຊະອານາ
ຈັກໄທ ເປັນການອຳນວຍຄວາມສະດວກແກ່ການຂົນສົ່ງ ລະຫວ່າງພາຄີຄູ່ສັນຍາ ໃຫ້ໄດ້ຮັບຜົນດີທີ່ສຸດ ( ຊຶ່ງຕໍ່
ໄປນີ້ເອີ້ນວ່າ “ອະນຸສັນຍາສະບັບນີ້” ).

ໄດ້ ຕົກ ລົງ ກັນ ດັ່ງຕໍ່ໄປນີ້:

## ມາດຕາ 1

## ຄຳນິຍາມ.

ເພື່ອຈຸດປະສົງ ຂອງອະນຸສັນຍາສະບັບນີ້:

1. ການຂົນສົ່ງລະຫວ່າງປະເທດ: ໝາຍເຖິງ ການຂົນສົ່ງຂ້າມແດນ ແລະ ຜ່ານແດນ.
2. ການຂົນສົ່ງຂ້າມແດນ: ໝາຍເຖິງ ການຂົນສົ່ງສິນຄ້າ ຫຼື ໂດຍສານ ລະຫວ່າງດິນແດນພາຄີຄູ່ສັນຍາ.
3. ການຂົນສົ່ງຜ່ານແດນ: ໝາຍເຖິງ ການຂົນສົ່ງ ສິນຄ້າ ຫຼື ຜູ້ໂດຍສານ ຜ່ານດິນແດນ ຂອງພາຄີຄູ່ສັນຍາໄປຍັງປະເທດ ທີ່ສາມ.
4. ໜ່ວຍງານ ທີ່ກ່ຽວຂ້ອງ: ໝາຍເຖິງ ໜ່ວຍງານ ຫຼື ຫຼາຍໜ່ວຍງານທີ່ລັດຖະບານແຕ່ງຕັ້ງ ແລະ ໃຫ້ຮັບຜິດຊອບການຈັດຕັ້ງ ປະຕິບັດ ອະນຸສັນຍາ ສະບັບນີ້.
5. ຜູ້ດຳເນີນການຂົນສົ່ງ: ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດຕາມກົດໝາຍ ຂອງພາຄີ ຄູ່ ສັນຍາ ຝ່າຍໃດ ຝ່າຍໜຶ່ງເພື່ອດຳເນີນການຂົນສົ່ງ ສິນຄ້າ ຫຼື ຜູ້ໂດຍສານ.
6. ພາຫະນະຂົນສົ່ງ: ໝາຍເຖິງ ລົດຂົນສົ່ງສິນຄ້າ ແລະ ລົດໂດຍສານ .
7. ລົດຂົນສົ່ງສິນຄ້າ : ໝາຍເຖິງ ລົດທີ່ໃຊ້ສຳລັບຂົນສົ່ງສິນຄ້າຊຶ່ງມີລາຍລະອຽດຕາມທີ່ລະບຸໄວ້ໃນອະນຸສັນຍາສະບັບນີ້.
8. ລົດໂດຍສານ: ໝາຍເຖິງ ລົດທີ່ໃຊ້ ໃນການຂົນສົ່ງ ຜູ້ໂດຍສານ ຊຶ່ງມີລາຍລະອຽດ ຕາມທີ່ໄດ້ລະບຸໄວ້ໃນ ອະນຸສັນຍາສະບັບນີ້.
9. ການຂົນສົ່ງປະຈຳທາງ: ໝາຍເຖິງ ການຂົນສົ່ງ ສິນຄ້າ ຫຼື ຜູ້ໂດຍສານ ຕາມເສັ້ນທາງ ທີ່ກຳນົດໃຫ້ເປັນປະ ຈຳ.
10. ການຂົນສົ່ງບໍ່ປະຈຳທາງ: ໝາຍເຖິງ ການຂົນສົ່ງສິນຄ້າ ຫຼື ຜູ້ໂດຍສານ ໃນລັກສະນະທີ່ບໍ່ແມ່ນການຂົນສົ່ງປະຈຳທາງ.
11. ການຂົນສົ່ງພິເສດ: ໝາຍເຖິງ ການຂົນສົ່ງສິນຄ້າ ທີ່ມີນ້ຳໜັກບັນທຸກ ແລະ ມີຂະໜາດເກີນ ຈາກທີ່ກົດໝາຍ ຂອງ ພາຄີຄູ່ສັນຍາອີກຝ່າຍໜຶ່ງ ໄດ້ກຳນົດໄວ້ ຫຼື ການຂົນສົ່ງສິນຄ້າ ທີ່ເປັນອັນຕະລາຍ ຕໍ່ ສຸກຂະພາບ ແລະ ສິ່ງແວດລ້ອມ.

## ມາດຕາ 2

## ຈຸດຜ່ານແດນ.

ເພື່ອຈຸດປະສົງໃນການດຳເນີນ ການຂົນສົ່ງສິນຄ້າ ແລະ ໂດຍສານ ລະຫວ່າງ ດິນແດນຂອງ ພາຄີຄູ່ສັນຍາ, ພາຄີຄູ່ສັນຍາ ໄດ້ຕົກ ລົງກຳນົດ ຈຸດຜ່ານແດນ ດັ່ງຕໍ່ໄປນີ້:

1. ຈຸດຜ່ານແດນຂອງ ສປປລາວ:

**ກ. ດ່ານຜ່ານແດນສາກົນ:**

| | |
|---|---|
| 1. ຫ້ວຍຊາຍ | ແຂວງບໍ່ແກ້ວ |
| 2. ຂົວມິດຕະພາບ | ກຳແພງນະຄອນວຽງຈັນ |
| 3. ທ່າແຂກ | ແຂວງຄຳມ່ວນ |
| 4. ສະຫ້ວນນະເຂດ | ແຂວງສະຫວັນນະເຂດ |
| 5. ວັງເຕົ່າ | ແຂວງຈຳປາສັກ |

**ຂ. ດ່ານທ້ອງຖິ່ນ:**

| | |
|---|---|
| 1. ນ້ຳເງິນ | ແຂວງໄຊຍະບູລີ |
| 2. ແກ່ນທ້າວ | ແຂວງໄຊຍະບູລີ |
| 3. ປາກຊັນ | ແຂວງບໍລິຄຳໄຊ |
| 4 ປາກຕະພານ | ແຂວງສາລະວັນ |
| 5. ບ້ານວັງ | ແຂວງວຽງຈັນ |

2. ຈຸດຜ່ານແດນຂອງໄທ:

ຈຸດຜ່ານແດນຖາວອນ

| | |
|---|---|
| 1. ຊຽງຂອງ | ຈັງຫວັດຊຽງລາຍ |
| 2. ຫ້ວຍໂກນ | ຈັງຫວັດນ່ານ |
| 3. ໜອງຄາຍ | ຈັງຫວັດໜອງຄາຍ |
| 4. ນະຄອນພະນົມ | ຈັງຫວັດນະຄອນພະນົມ |
| 5. ມຸກດາຫານ | ຈັງຫວັດມຸກດາຫານ |
| 6. ຊ່ອງເມກ | ຈັງຫວັດອຸບົນລາຊະທານີ |
| 7. ບຶງການ | ຈັງຫວັດໜອງຄາຍ |
| 8. ໜອງຜື | ຈັງຫວັດເລີຍ |
| 9. ໂຄກໄຜ່ | ຈັງຫວັດເລີຍ |
| 10. ປາກແຊງ | ຈັງຫວັດອຸບົນລາຊະທານີ |

ໃນກໍລະນີທີ່ເຫັນສົມຄວນ ພາຄີຄູ່ສັນຍາ ສາມາດເຈລະຈາເພື່ອກຳນົດ ຈຸດຜ່ານແດນເພີ່ມເຕີມ ຈາກທີ່ກຳນົດໄວ້ຂ້າງເທິງນີ້ໄດ້.

## ມາດຕາ 3

### ພາຫະນະຂົນສົ່ງ

ພາຄີຄູ່ສັນຍາແຕ່ລະຝ່າຍ ອະນຸຍາດໃຫ້ໃຊ້ ພາຫະນະຂົນສົ່ງ ຕາມທີ່ໄດ້ ກຳນົດໃນ**ໃບຊ້ອນທ້າຍ** ກ ທີ່ໄດ້ຈົດທະບຽນ ແລະ ໄດ້ຮັບອະນຸຍາດຖືກຕ້ອງຕາມກົດໝາຍຈາກພາຄີຄູ່ສັນຍາ ອີກຝ່າຍໜຶ່ງ ເພື່ອດຳເນີນການຂົນສົ່ງສິນຄ້າ ແລະ ຜູ້ໂດຍສານ ພາຍໃຕ້ອະນຸສັນຍາ ສະບັບນີ້.

## ມາດຕາ 4

### ຂໍ້ກຳນົດ ທາງດ້ານ ເຕັກນິກ ຂອງ ລົດ.

ພາຫະນະຂົນສົ່ງ ທີ່ໃຊ້ໃນການຂົນສົ່ງ ພາຍໃຕ້ອະນຸສັນຍາສະບັບນີ້ ຕ້ອງເປັນໄປ ຕາມຂໍ້ກຳນົດ ທາງດ້ານເຕັກນິກ ຂອງລົດ ກ່ຽວກັບ ຂະໜາດລົດ, ນ້ຳໜັກ ແລະ ນ້ຳໜັກບັນທຸກສູງສຸດ ຂອງລົດ, ມາດຖານ ການ ປ່ອຍ ອາຍ ເສັຍ ແລະ ເລື່ອງອື່ນໆ ທີ່ກ່ຽວຂ້ອງ ຊຶ່ງໄດ້ລະບຸໄວ້ ໃນໃບຊ້ອນທ້າຍ ກ ຂອງ ອະນຸສັນຍາ ສະບັບນີ້.

## ມາດຕາ 5

### ການຮັບຮູ້ ໃບຢັ້ງຢືນ ການກວດເຕັກນິກພາຫະນະຊຶ່ງກັນ ແລະ ກັນ

1. ພາຄີຄູ່ສັນຍາ ຕ້ອງກວດກາເຕັກນິກພາຫະນະຂົນສົ່ງ ທີ່ຈົດທະບຽນໃນດິນແດນ ຂອງ ຕົນທີ່ນຳໃຊ້ ໃນການຂົນສົ່ງ ລະຫວ່າງປະເທດ ພາຍໃຕ້ ອະນຸສັນຍາສະບັບນີ້, ຕາມທີ່ກຳນົດໄວ້ໃນກົດໝາຍ ຂອງ ຕົນ.

2. ພາຄີຄູ່ສັນຍາ ຕ້ອງຮັບຮູ້ໃບຢັ້ງຢືນ ການກວດກາເຕັກນິກພາຫະນະຂົນສົ່ງ ທີ່ນຳໃຊ້ ໃນການຂົນສົ່ງ ພາຍໃຕ້ອະນຸສັນຍາສະບັບນີ້ ທີ່ອອກໃຫ້ໂດຍ ພາຄີຄູ່ສັນຍາ ອີກຝ່າຍໜຶ່ງ ຕາມຂໍ້ຕົກລົງ ວ່າດ້ວຍ ການຮັບຮູ້ໃບ ຢັ້ງຢືນ ການກວດເຕັກນິກພາຫະນະຂົນສົ່ງ ທີ່ດຳເນີນທຸລະກິດ ສຳລັບລົດບັນທຸກສິນຄ້າ ແລະ ລົດບໍລິການ ສາທາລະນະ ທີ່ອອກໃຫ້ໂດຍປະເທດສະມາຊິກອາຊຽນ ຊຶ່ງລົງນາມທີ່ ສິງກະໂປ ເມື່ອວັນທີ 10 ກັນຍາ 1998.

## ມາດຕາ 6

### ເອກະສານປະຈຳພາຫະນະຂົນສົ່ງ

1. ໃນການດຳເນີນການຂົນສົ່ງຕາມອະນຸສັນຍາສະບັບນີ້ ພາຫານະຂົນສົ່ງຂອງ ພາຄີຄູ່ສັນຍາຝ່າຍໜຶ່ງ ໃນເວລາຢູ່ດິນແດນຂອງພາຄີຄູ່ສັນຍາອີກຝ່າຍໜຶ່ງຕ້ອງມີເອກະສານທີ່ໄດ້ຮັບການຢັ້ງຢືນຈາກ ໜ່ວຍງານທີ່ກ່ຽວຂ້ອງ ພ້ອມດ້ວຍຄຳແປເປັນພາສາອັງກິດ ດັ່ງຕໍ່ໄປນີ້ :

(1). ໃບທະບຽນພາຫະນະຂົນສົ່ງທີ່ລະບຸລາຍລະອຽດກ່ຽວກັບພາຫະນະ ແລະ ຊື່ເຈົ້າຂອງພາຫະນະ.
(2). ໃບຢັ້ງຢືນເສັຽຄ່າທາງ ທີ່ຍັງບໍ່ທັນໝົດອາຍຸ.
(3). ໃບຢັ້ງຢືນກວດກາ ເຕັກນິກ ພາຫະນະ.
(4). ໃບອະນຸຍາດດຳເນີນທຸລະກິດຂົນສົ່ງ.
(5). ໃບອະນຸຍາດ ຜ່ານແດນເຂົ້າ-ອອກ.
(6). ໃບຢັ້ງຢືນການປະກັນໄພ ບຸກຄົນທີ່ 3.
(7). ໃບນຳສົ່ງສິນຄ້າ ສຳລັບລົດຂົນສົ່ງສິນຄ້າ.

(8). ໃບຂັບຂີ່ທີ່ຍັງບໍ່ທັນໝົດອາຍຸຊຶ່ງໜ່ວຍງານຂອງພາຄີຄູ່ສັນຍາຝ່າຍຕົນເປັນຜູ້ອອກໃຫ້.

(9). ໃບບັນຊີລາຍຊື່ຜູ້ໂດຍສານ ສໍາລັບລົດຂົນສົ່ງໂດຍສານ.

(10). ໃບກໍາກັບພາສີ ສໍາລັບສິນຄ້າຜ່ານແດນ.

(11) . ບັນຊີສິນຄ້າ ສໍາລັບສິນຄ້າຜ່ານແດນ

(12). ລາຍການອຸປະກອນເຄື່ອງໃຊ້ ແລະ ອາໄຫ່ລລົດທີ່ຈໍາເປັນເຊັ່ນ ນ້ຳມັນເຊື້ອໄຟ, ນ້ຳມັນລໍ່ລື່ນ ຊຶ່ງຕ້ອງແຈ້ງເຈົ້າໜ້າທີ່ພາສີຂອງ ພາຄີຄູ່ ສັນຍາຝ່າຍໜຶ່ງ ທີ່ຈຸດຜ່ານແດນເພື່ອຂໍຍົກເວັ້ນພາສີ.

2. ພາຄີຄູ່ສັນຍາຝ່າຍໜຶ່ງ ສາມາດປັບໄໝຜູ້ປະກອບການຂົນສົ່ງໃດນຶ່ງຂອງ ພາຄີຄູ່ ສັນຍາອີກຝ່າຍໜຶ່ງໄດ້ ໃນກໍລະນີ ທີ່ ຜູ້ດໍາເນີນການຂົນສົ່ງນັ້ນແຈ້ງເອກະສານບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ຕາມທີ່ລະບຸໄວ້ຂ້າງເທິງ

ມາດຕາ 7

**ຜູ້ຂັບຂີ່, ພະນັກງານປະຈໍາລົດ ແລະ ພາຫະນະຂົນສົ່ງ.**

1. ຜູ້ໂດຍສານ, ຜູ້ຂັບຂີ່ ແລະ ພະນັກງານປະຈໍາລົດຂອງ ພາຄີຄູ່ສັນຍາຝ່າຍນຶ່ງເມື່ອຢູ່ໃນດິນແດນຂອງ ພາຄີຄູ່ສັນຍາອີກຝ່າຍໜຶ່ງ ຕ້ອງປະຕິບັດຕາມລະບຽບ, ກົດໝາຍ, ຮີດຄອງປະເພນີ ແລະ ບໍ່ສ້າງຄວາມເສັຍຫາຍ ຕໍ່ສະພາບແວດລ້ອມ ຂອງ ພາຄີຄູ່ ສັນຍາ ຝ່າຍນັ້ນ.

2. ໃນເວລາຢູ່ດິນແດນຂອງ ພາຄີຄູ່ສັນຍາ ອີກຝ່າຍໜຶ່ງ ພາຫະນະຂົນສົ່ງ ພາຍໃຕ້ອະນຸສັນຍາ ສະບັບນີ້ຕ້ອງເຂົ້າຈອດ ຫຼື ຢຸດພັກ ຢູ່ສະຖານທີ່ ທີ່ກໍານົດ ໄວ້ໃນ**ໃບຊ້ອນທ້າຍ ຂ** ແລະ ໃຫ້ອອກຈາກດິນແດນຂອງ ພາຄີຄູ່ສັນຍາຝ່າຍນັ້ນ ພາຍໃນເວລາທີ່ກໍານົດ. ໃນກໍລະນີ ທີ່ບໍ່ສາມາດນໍາພາຫະນະຂົນສົ່ງອອກຈາກດິນແດນຂອງພາຄີຄູ່ສັນຍາຝ່າຍນັ້ນ ເນື່ອງຈາກລົດເປ່ເພ ຫຼື ເກີດອຸປະຕິເຫດ ຫຼື ເຫດສຸດວິໃສໃຫ້ແຈ້ງເຈົ້າໜ້າທີ່ທີ່ກ່ຽວຂ້ອງຊາບໂດຍດ່ວນ.

ມາດຕາ 8

**ການກໍານົດ ເສັ້ນທາງ ຂົນສົ່ງທາງບົກ ລະຫວ່າງປະເທດ.**

ເພື່ອຜົນປະໂຫຍດ ຂອງ ການຂົນສົ່ງ ພາຍໃຕ້ອະນຸສັນຍາສະບັບນີ້ ພາຄີຄູ່ສັນຍາ ຕົກລົງກໍານົດເສັ້ນທາງການຂົນສົ່ງຂ້າມແດນ ແລະ ຜ່ານແດນ ລະຫວ່າງດິນແດນຂອງ ພາຄີຄູ່ສັນຍາ ດັ່ງຕໍ່ໄປນີ້:

+. ຢູ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

1-ເສັ້ນທາງ ຫ້ວຍຊາຍ -ນ້ຳທາ : ຈາກຫ້ວຍຊາຍ- ນ້ຳທາ-ບໍ່ເຕັນ( ຊາຍແດນລາວ - ຈີນ ) ໂດຍໃຊ້ທາງເລກ 3.

-ເສັ້ນທາງນ້ຳທາ-ເມືອງຂວາ: ຈາກນ້ຳທາ-ອຸດົມໄຊ-ເມືອງຂວາ (ຊາຍແດນລາວ-ຫວຽດນາມ) ໂດຍໃຊ້ທາງເລກ 1.

2-ເສັ້ນທາງອຸດົມໄຊ-ເວີນຄາມ: ຈາກ ອຸດົມໄຊ- ຫຼວງພະບາງ- ວຽງຈັນ- ປາກຊັນ- ທ່າແຂກ-
- ສະຫວັນນະເຂດ- ປາກເຊ - ເວີນຄາມ (ຊາຍແດນລາວ - ກຳປູເຈັຍ) ໂດຍ ໃຊ້ທາງເລກທີ່ 13.

3- ເສັ້ນທາງ ບໍລິຄຳໄຊ - ນ້ຳພາວ: ຈາກ ບໍລິຄຳໄຊ- ຫຼັກ 20 - ນ້ຳພາວ (ຊາຍແດນລາວ -
- ຫວຽດນາມ) ໂດຍໃຊ້ທາງເລກ 8.

4- ເສັ້ນທາງສະຫວັນນະເຂດ - ແດນສະຫວັນ: ຈາກ ສະຫວັນນະເຂດ- ເຊໂນ- ເມືອງພີນ-ເຊໂປນ -
ແດນສະຫວັນ (ຊາຍແດນລາວ - ຫວຽດນາມ) ໂດຍໃຊ້ທາງເລກ 9.

5-ເສັ້ນທາງ ວັງເຕົ່າ- ປາກເຊ: ຈາກ ດ່ານວັງເຕົ່າ- ປາກເຊ ໂດຍໃຊ້ທາງເລກ 10.

6- ເສັ້ນທາງທ່າແຂກ - ຈາລໍ: ຈາກ ທ່າແຂກ- ມະຫາໄຊ- ຍົມມະລາດ-ຈາລໍ (ຊາຍແດນລາວ - ຫວຽດ
ນາມ )ໂດຍໃຊ້ ທາງເລກ 12.

7-ເສັ້ນທາງ ປາກເຊ- ອັດຕະປື : ຈາກປາກເຊ- ອັດຕະປື (ຊາຍແດນລາວ - ຫວຽດນາມ) ໂດຍ
ໃຊ້ທາງ ເລກ 13; 18 .

+. ຢູ່ລາຊະອານາຈັກໄທ.

1- ເສັ້ນທາງສາຍແມ່ສາຍ - ບາງກອກ ເສັ້ນທາງເລີ່ມຈາກ ດ່ານແມ່ສາຍຜ່ານຊຽງລາຍ- ພະເຢົາ- ລຳປາງ- ຕາກ- ກຳແພງເພັດ- ນະຄອນສະຫວັນ- ສິງບູລີ- ອ່າງທອງ- ປະທຸມທານີ- ບາງກອກ ໂດຍໃຊ້ ທາງຫຼວງໝາຍເລກ 1 ແລະ 32 ແລະ ທາງຫລວງພິເສດລະຫວ່າງເມືອງ ໝາຍເລກ 9 ( ວົງແຫວນ ດ້ານຕາເວັນອອກ )

2- ເສັ້ນທາງສາຍຊຽງຂອງ - ຊຽງລາຍ ເສັ້ນທາງເລີ່ມຈາກດ່ານຊຽງຂອງຈົນ ເຖິງຊຽງລາຍ ໂດຍ ໃຊ້ທາງ ຫຼວງ ໝາຍເລກ 1020 ແລະ 1152.

3- ເສັ້ນທາງສາຍໜອງຄາຍ-ບາງກອກ ເສັ້ນທາງເລີ່ມຈາກ ໜອງຄາຍ ຜ່ານອຸດອນທານີ- ຂອນແກ່ນ - ນະຄອນ ລາດຊະສີມາ- ສາລະບູລີ -ປະທຸມທານີ -ບາງກອກ ໂດຍໃຊ້ເສັ້ນທາງຫຼວງໝາຍ ເລກ 1 ແລະ 2.

4- ເສັ້ນທາງສາຍມຸກດາຫານ- ແມ່ສອດ ເສັ້ນທາງເລີ່ມຈາກ ມຸກດາຫານ ຜ່ານກາລະສິນ- ຂອນແກ່ນ ພິດສະນຸໂລກ- ສຸໂຂໄທ- ຕາກ- ເມືອງແມ່ສອດ ໂດຍໃຊ້ເສັ້ນທາງຫຼວງໝາຍເລກ 2042, 213, 209, 12 ແລະ 105.

5- ເສັ້ນທາງສາຍຫີນກອງ - ອາລັນຍະປະເທດ ເສັ້ນທາງເລີ່ມຈາກຫີນກອງ ( ແຍກຈາກທາງຫຼວງ ໝາຍ ເລກ 1 ) ຜ່ານນະຄອນນາຍົກ- ປາຈີນບູລີ -ສະແກ້ວ- ເມືອງອະລັນຍະປະເທດ (ຊາຍ ແດນກຳປູເຈັຍ) ໂດຍໃຊ້ທາງຫຼວງໝາຍເລກ 33.

6- ເສັ້ນທາງສາຍ ນະຄອນລາດຊະສີມາ - ມາບຕະພຸດ ເສັ້ນທາງເລີ່ມຈາກ ນະຄອນລາດຊະສີ ມາ ຜ່ານເມືອງ ກາບິນບູລີ- ເມືອງພະນົມສາລະຄາມ -ມາບຕະພຸດ ໂດຍໃຊ້ເສັ້ນທາງຫຼວງ ໝາຍເລກ 304, 331, 36 ແລະ 3191.

7- ເສັ້ນທາງສາຍບາງກອກ - ແຫຼມຊະບັງ ເສັ້ນທາງເລີ່ມຈາກ ບາງກອກຜ່ານຊົນບູລີ- ແຫຼມຊະບັງ - ມາບຕະ ພຸດ ໂດຍໃຊ້ເສັ້ນທາງຫຼວງພິເສດລະຫ່ວາງເມືອງ ໝາຍເລກ 7 (ທາງຫຼວງກຸງເທບ -ຊົນ ບູລີ ສາຍໃໝ່) ແລະ ທາງຫຼວງໝາຍເລກ 36.

8- ເສັ້ນທາງສາຍບາງກອກ-ສຸໄຫວໂກລົກ ເສັ້ນທາງເລີ່ມຈາກບາງກອກຜ່ານສະມຸດສາຄອນ ສະມຸດ

ສົງຄາມ- ເພັດສະບູລີ -ປະຈວບຄີລີຂັນ- ຊຸມພອນ- ພັດຕະລຸງ- ປັດຕະນີ- ນາລາທິວາດ- ສຸໄຫງ ໂກລົກ ໂດຍ ໃຊ້ທາງຫຼວງໝາຍເລກ 35, 4, 41, 43, 42, 4084 ແລະ 4057.

9- ເສັ້ນທາງສາຍນະຄອນລາຊະສີມາ - ອຸບົນລາຊະທານີ - ຊ່ອງເມັກ ເສັ້ນທາງເລີ່ມຈາກ ນະຄອນລາຊະສີມາ ຜ່ານ ເມືອງໂຊກໄຊ- ເມືອງເດດອຸດົມ- ອຸບົນລາດຊະທານີ -ຊ່ອງ ເມັກ ໂດຍໃຊ້ເສັ້ນທາງຫຼວງໝາຍເລກ 224, 24 ແລະ 217.

10- ເສັ້ນທາງສາຍ ເມືອງສົມເດັດ- ສາກົນນະຄອນ - ນະຄອນພະນົມ ໂດຍໃຊ້ເສັ້ນທາງຫຼວງໝາຍ ເລກ 213 ແລະ 22

ພາຄີຄູ່ສັນຍາຕົກລົງວ່າເສັ້ນທາງຂົນສົ່ງທາງບົກ ລະຫວ່າງປະເທດອາດສາມາດເພີ້ມເຕີມ ຫຼື ແກ້ໄຂໄດ້ໂດຍຜ່ານການປຶກສາຫາລືກັນແຕ່ລະໄລຍະ.

## ມາດຕາ 9

## ການຂົນສົ່ງຜູ້ໂດຍສານ.

1. ການຂົນສົ່ງຂ້າມແດນ.

ການຂົນສົ່ງຜູ້ໂດຍສານຂ້າມແດນລະຫວ່າງດິນແດນຂອງ ພາຄີຄູ່ສັນຍາ ຕ້ອງໄດ້ຮັບການເຫັນດີຈາກ ພາຄີຄູ່ ສັນຍາ ອີກ ຝ່າຍໜຶ່ງ ແລະ ຕ້ອງໄດ້ປະຕິບັດຕາມລະບຽບດັ່ງຕໍ່ໄປນີ້:

ກ. ການກວດກາ ຂອງເຈົ້າໜ້າທີ່ ຕຳຫລວດກວດຄົນເຂົ້າເມືອງ, ພາສີ, ສາທາລະນະສຸກ ແລະ ອື່ນໆ ກ່ຽວກັບການເຂົ້າເມືອງຕ້ອງດຳເນີນການຢູ່ຈຸດດຽວພາຍໃນດ່ານຊາຍແດນຂອງ ພາຄີຄູ່ສັນຍາ ແຕ່ລະຝ່າຍ.

ຂ. ຫ້າມດຳເນີນການຂົນສົ່ງຜູ້ໂດຍສານ ທີ່ມີເອກະສານເດີນທາງບໍ່ຄົບຖ້ວນ, ບຸກຄົນທີ່ຕ້ອງຫ້າມ, ບຸກຄົນທີ່ມີອາວຸດ, ມີວັດຖຸອັນຕະລາຍ ຫຼື ສານເຄມີ ທີ່ເປັນອັນຕະລາຍຕໍ່ສຸກຂະພາບຂອງ ຜູ້ໂດຍສານ ຫຼື ສິ່ງແວດລ້ອມ.

ຄ. ການກຳນົດອັດຕາຄ່າຂົນສົ່ງ ແລະ ຄ່າບໍລິການອື່ນໆ ໃນການຂົນສົ່ງ ໃຫ້ເປັນໄປຕາມ ອັດຕາ ທີ່ພາຄີ ຄູ່ສັນຍາ ໄດ້ຕົກລົງກັນ.

2. ການຂົນສົ່ງຜ່ານແດນ:

ພາຄີຄູ່ສັນຍາຕ້ອງອຳນວຍຄວາມສະດວກໃນການຂົນສົ່ງຜູ້ໂດຍສານຈາກດິນແດນພາຄີຄູ່ສັນຍາ ອີກຝ່າຍໜຶ່ງຜ່ານດິນແດນຂອງ ຕົນໄປຍັງປະເທດທີ 3 ຫຼື ຈາກປະເທດ ທີ 3 ຜ່ານດິນແດນ ຂອງຕົນ ໄປຍັງດິນແດນຂອງ ພາຄີຄູ່ສັນຍາອີກຝ່າຍໜຶ່ງ ບໍ່ວ່າຈະໃຊ້ ພາຫະນະ ຂົນສົ່ງ ຂອງ ພາຄີຄູ່ສັນຍາ ອີກຝ່າຍໜຶ່ງ ຫຼື ຂອງປະເທດທີ 3 ທີ່ໄດ້ເຊັນ ສັນຍາວ່າດ້ວຍການຂົນສົ່ງ ທາງບົກ ກັບພາຄີຄູ່ສັນຍາ ທັງສອງຝ່າຍ ທີ່ສອດຄ່ອງ ກັບມາດຕາ 2 ຂອງ ສັນຍາ ວ່າດ້ວຍການຂົນສົ່ງທາງບົກ ລະຫວ່າງລັດຖະ ບານ ແຫ່ງ ສາທາລະນາລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ແຫ່ງ ລາຊະອາ ນາຈັກໄທ ທີ່ໄດ້ ລົງນາມ ເມື່ອວັນທີ່ 5 ມີນາ 1999 ທີ່ ບາງກອກ.

## ມາດຕາ 10

### ການຂົນສົ່ງສິນຄ້າ.

1. ການຂົນສົ່ງ ຂ້າມແດນ:

ພາຄີຄູ່ສັນຍາຕ້ອງອະນຸຍາດໃຫ້ຜູ້ດຳເນີນການຂົນສົ່ງທີ່ໄດ້ຮັບອະນຸຍາດຢ່າງຖືກຕ້ອງໂດຍພາຄີຄູ່ສັນຍາອີກຝ່າຍໜຶ່ງດຳເນີນການຂົນສົ່ງສິນຄ້າຂ້າມແດນລະຫວ່າງດິນແດນຂອງ ພາຄີຄູ່ສັນຍາໂດຍໃຊ້ພາຫະນະຂົນສົ່ງ ຂອງຕົນ ຫຼື ຂອງພາຄີຄູ່ສັນຍາອີກຝ່າຍໜຶ່ງ ຫຼື ຂອງປະເທດທີ 3 ທີ່ໄດ້ເຊັນສັນຍາ ວ່າດ້ວຍການຂົນສົ່ງທາງບົກ ກັບພາຄີຄູ່ສັນຍາທັງສອງຝ່າຍ ທີ່ສອດຄ່ອງກັບມາດຕາ 2 ຂອງ ສັນຍາວ່າດ້ວຍການຂົນສົ່ງທາງ ບົກລະຫວ່າງ ລັດຖະບານ ແຫ່ງສາທາລະນາລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ແຫ່ງ ລາຊະອານາຈັກໄທ ທີ່ໄດ້ລົງນາມ ເມື່ອວັນທີ 5 ມີນາ 1999 ທີ່ ບາງກອກ.

2. ການຂົນສົ່ງ ຜ່ານແດນ.

2.1 ພາຄີຄູ່ສັນຍາ ຕ້ອງອະນຸຍາດໃຫ້ໃຊ້ພາຫະນະຂົນສົ່ງ ຕາມທີ່ກຳນົດ ໃນ**ໃບຊ້ອນ ທ້າຍ ກ** ດຳເນີນການຂົນສົ່ງສິນຄ້າ ຂ້າມແດນ ແລະ ຜ່ານແດນ ລະຫວ່າງພາຄີຄູ່ສັນຍາ ພາຍໃຕ້ອະນຸສັນຍາ ສະບັບນີ້.

ພາຫະນະຂົນສົ່ງທີ່ນອກເໜືອຈາກທີ່ໄດ້ລະບຸໄວ້ໃນຂ້າງເທິງນີ້ຕ້ອງໄດ້ຮັບອະນຸຍາດເປັນກໍລະນີ ພິເສດ ຈາກພາຄີຄູ່ສັນຍາ .

2.2 ພາຄີຄູ່ສັນຍາ ອະນຸຍາດໃຫ້ ມີການຂ່ຽນຖ່າຍສິນຄ້າຜ່ານແດນໄດ້ໃນກໍລະນີ ດັ່ງຕໍ່ໄປນີ້:

ກ. ພາຫະນະເກີດອຸປະຕິເຫດ ຫຼື ເປ່ເພ ບໍ່ສາມາດເຄື່ອນຍ້າຍໄດ້.

ຂ. ເຫດສຸດວິໄສ.

3. ການຂົນສົ່ງສິນຄ້າ ຂ້າມແດນ ແລະ ຜ່ານແດນລະຫວ່າງ ພາຄີຄູ່ສັນຍາ ພາຍໃຕ້ອານຸສັນຍາສະບັບນີ້ ຕ້ອງປະຕິບັດຕາມລະບຽບ ຂອງ ພາຄີຄູ່ສັນຍາຢ່າງເຄັ່ງຄັດ.

4. ການກຳນົດລາຄາຂົນສົ່ງສິນຄ້າ ໃຫ້ເປັນໄປຕາມກົນໄກຕະຫຼາດ.

## ມາດຕາ 11

### ການ ຂົນສົ່ງພິເສດ.

1. ການຂົນສົ່ງພິເສດ ພາຍໃຕ້ອະນຸສັນຍາສະບັບນີ້ຕ້ອງຂໍອະນຸຍາດ ຈາກໜ່ວຍງານທີ່ກ່ຽວຂ້ອງ

ຂອງ ພາຄີຄູ່ສັນຍາອີກຝ່າຍໜຶ່ງ. ໜ່ວຍງານທີ່ກ່ຽວຂ້ອງ ຕ້ອງແຈ້ງຜົນການພິຈາລະນາໃຫ້ຊາບ ພາຍໃນ 15 ວັນ ນັບແຕ່ວັນທີ່ໄດ້ຮັບ ຄຳຮ້ອງຂໍດັ່ງກ່າວ.

2. ພາຫະນະທີ່ໃຊ້ໃນການຂົນສົ່ງພິເສດ ຕ້ອງຕິດເຄື່ອງໝາຍພິເສດທີ່ສອດຄ່ອງ ແລະ ຖືກຕ້ອງກັບການປະຕິບັດຂອງ ສາກົນ ທີ່ພາຄີຄູ່ສັນຍາເຫັນດີນຳກັນ.

## ມາດຕາ12

## ການບໍລິການ ການຂົນສົ່ງ.

1. ຜູ້ດຳເນີນການຂົນສົ່ງຂອງ ພາຄີຄູ່ສັນຍາແຕ່ລະຝ່າຍ ທີ່ມີຈຸດປະສົງ ຈະດຳເນີນການຂົນສົ່ງ ລະຫວ່າງປະເທດ ພາຍໃຕ້ອະນຸສັນຍາສະບັບນີ້ ຕ້ອງຂໍອະນຸຍາດ ດຳເນີນການບໍລິການການຂົນສົ່ງ ລະຫວ່າງປະເທດ ຕາມທີ່ກົດໝາຍ ແລະ ລະບຽບ ຂອງ ພາຄີຄູ່ສັນຍາ ອີກຝ່າຍໜຶ່ງກຳນົດ.

2. ຜູ້ດຳເນີນການຂົນສົ່ງຂອງ ພາຄີຄູ່ສັນຍາ ຝ່າຍໜຶ່ງ ທີ່ໄດ້ຮັບອະນຸຍາດຕາມທີ່ກຳນົດໄວ້ໃນ ວັກ 1 ຂອງມາດຕານີ້ ສາມາດ ດຳເນີນ ການຂົນສົ່ງສິນຄ້າ ຫຼື ຜູ້ໂດຍສານ ເຂົ້າ ຫຼື ອອກຈາກ ດິນແດນຂອງ ພາຄີຄູ່ ສັນຍາອີກຝ່າຍໜຶ່ງໄດ້.

## ມາດຕາ 13

## ການກວດກາ ທີ່ດ່ານຊາຍແດນ.

1. ການກວດກາພາຫະນະ ຂົນສົ່ງ ຕາມລະບຽບກ່ຽວກັບ ການເຂົ້າ - ອອກ ປະເທດ ໂດຍພາຄີຄູ່ສັນຍາ ແຕ່ລະຝ່າຍນັ້ນຕ້ອງດຳເນີນຢູ່ຈຸດດ່ານຊາຍແດນຂອງ ຕົນບ່ອນດຽວເທົ່ານັ້ນ.

2. ການກວດກາສິນຄ້າຜ່ານແດນ ຫຼື ສິນຄ້າຂົນສົ່ງດ້ວຍຕູ້ຄອນເທນເນີ, ໃຫ້ປະຕິບັດຕາມການປະຕິບັດຂອງ ສາກົນ.

## ມາດຕາ14

## ການລາຍງານ ຢູ່ຈຸດ ກວດກາ .

ຜູ້ຂັບຂີ່ພາຫະນະຂົນສົ່ງ ພາຍໃຕ້ອະນຸສັນຍາສະບັບນີ້ ຕອ້ງລາຍງານຕົວ ຢູ່ຈຸດກວດກາທີ່ພາຄີຄູ່ສັນຍາຈະຕົກລົງກັນ .

## ມາດຕາ 15

### ຄ່າທຳນຽມຜ່ານແດນ ແລະ ການເກັບຄ່າບໍລິການຕ່າງໆ.

1. ພາຄີຄູ່ສັນຍາຕ້ອງເກັບຄ່າທຳນຽມ ແລະ ຄ່າບໍລິການອື່ນໆທີ່ກ່ຽວຂ້ອງກັບການຜ່ານແດນພາຍໃຕ້ ອະນຸສັນຍາ ສະບັບນີ້ ຢູ່ທີ່ດ່ານຊາຍແດນ ຕາມອັດຕາ ທີ່ ພາຄີຄູ່ສັນຍາແຕ່ລະຝ່າຍໄດ້ກຳນົດ.

2. ບັນດາຄ່າທຳນຽມ ແລະ ຄ່າບໍລິການກ່ຽວກັບການບໍລິການຝາກສາງ, ເດີ່ນ, ສະຖານີຈອດລົດ, ຄ່າ ຄຸ້ມຖ່າຍສິນຄ້າ ແລະ ຄ່າບໍລິການອື່ນໆ ລວມທັງຄ່າທຳນຽມກ່ຽວກັບການບໍລິການທ່າເຮືອໃຫ້ ເປັນໄປ ຕາມອັດຕາ ທີ່ພາຄີຄູ່ສັນຍາ ຝ່າຍ ຜູ້ໃຫ້ການບໍລິການ ກຳນົດໄວ້ ແລະ ບໍ່ໃຫ້ສູງກ່ວາ ຄ່າທຳນຽມ ແລະ ຄ່າບໍລິການທີ່ໄດ້ເກັບຈາກ ຜູ້ດຳເນີນການຂົນສົ່ງ ພາຍໃນປະເທດຂອງຕົນ.

    ການປ່ຽນແປງໃດໆກ່ຽວກັບຄ່າທຳນຽມ ແລະ ຄ່າບໍລິການດັ່ງກ່າວ ຕ້ອງແຈ້ງໃຫ້ພາຄີຄູ່ ສັນຍາອີກຝ່າຍໜຶ່ງຊາບລ່ວງໜ້າ 3 ເດືອນກ່ອນຈະມີຜົນບັງຄັບໃຊ້.

## ມາດຕາ 16

### ສຳນັກງານ ຕົວແທນ.

ເພື່ອໃຫ້ເຈົ້າໜ້າທີ່ ທີ່ກ່ຽວຂ້ອງຂອງ ພາຄີຄູ່ສັນຍາ ສາມາດຕິດຕໍ່ ກັບຜູ້ດຳເນີການຂົນສົ່ງ ຂອງ ພາຄີຄູ່ສັນຍາອີກຝ່າຍໜຶ່ງ, ພາຄີຄູ່ສັນຍາແຕ່ລະຝ່າຍອະນຸຍາດໃຫ້ຜູ້ດຳເນີນການຂົນສົ່ງໃດ ໜຶ່ງຂອງ ພາຄີຄູ່ສັນຍາອີກຝ່າຍໜຶ່ງ ພາຍໃຕ້ອະນຸສັນຍາສະບັບນີ້ ຕັ້ງສຳນັກງານຕົວແທນ ຢູ່ດິນ ແດນຂອງຕົນ ຫຼື ແຕ່ງຕັ້ງສາຂາ ຕົວແທນ ຊຶ່ງໄດ້ຈົດທະບຽນຢ່າງ ຖືກຕ້ອງຕາມກົດໝາຍຂອງ ພາຄີຄູ່ ສັນຍາ.

## ມາດຕາ 17

### ການຊ່ວຍເຫຼືອ ໃນກໍລະນີເກີດອຸປະຕິເຫດ.

ຫາກພາຫະນະຂົນສົ່ງ ພາຍໃຕ້ອະນຸສັນຍາສະບັບນີ້ ລວມທັງບຸກຄົນ ຫຼື ສິນຄ້າ ຂອງ ພາຄີຄູ່ສັນຍາ ຝ່າຍໜຶ່ງ ເກີດອຸປະຕິເຫດໃນດິນແດນ ຂອງ ພາຄີຄູ່ສັນຍາອີກຝ່າຍໜຶ່ງ, ໃຫ້ພາຄີຄູ່ສັນຍາ ຝ່າຍ ນັ້ນ ໃຫ້ການຊ່ວຍເຫຼືອແກ່ພາຫະນະຂົນສົ່ງລວມທັງບຸກຄົນ ຫຼື ສິນຄ້າ ແລະ ແຈ້ງໃຫ້ເຈົ້າໜ້າທີ່ ທີ່ກ່ຽວຂ້ອງຂອງ ພາຄີຄູ່ສັນຍາ ຝ່າຍທີ່ເກີດອຸປະຕິເຫດຊາບໂດຍດ່ວນ.

ການໃຊ້ຈ່າຍທີ່ສືບເນື່ອງສິນຜົນ ທີ່ເກີດຂຶ້ນ ຈາກການຊ່ວຍເຫຼືອດັ່ງກ່າວ ພາຍໃຕ້ອະນຸສັນ ຍາສະບັບນີ້ ແມ່ນພາຄີຄູ່ສັນຍາຝ່າຍທີ່ເກີດອຸປະຕິເຫດນັ້ນ ເປັນຜູ້ຮັບຜິດຊອບ.

## ມາດຕາ 18

### ການລະເມີດອະນຸສັນຍາສະບັບນີ້.

1. ຫາກຜູ້ດຳເນີນ ການຂົນສົ່ງຂອງ ພາຄີຄູ່ສັນຍາຝ່າຍໜຶ່ງລະເມີດ ຂໍ້ກຳນົດຂອງ ອະນຸສັນຍາສະບັບນີ້ ຫຼື ລະບຽບການ ຫຼື ກົດໝາຍຂອງ ພາຄີຄູ່ສັນຍາອີກຝ່າຍໜຶ່ງ, ການແກ້ໄຂ ບັນຫາດັ່ງກ່າວໃຫ້ປະຕິບັດຕາມກົດໝາຍ ຂອງ ພາຄີຄູ່ສັນຍາຝ່າຍນັ້ນ.

2. ໃນກໍລະນີການລະເມີດອະນຸສັນຍາສະບັບນີ້ ເກີດຈາກເຫດສຸດວິໄສ ຫຼື ໄພທຳມະຊາດ ພາຄີຄູ່ສັນຍາ ຕ້ອງແກ້ໄຂດ້ວຍການເຈລະຈານຳກັນ.

## ມາດຕາ 19

### ການແກ້ໄຂຂໍ້ຂັດແຍ່ງ.

1. ການຂັດແຍ້ງໃດໆ ທີ່ເກີດຂຶ້ນຈາກການຈັດຕັ້ງປະຕິບັດ ຫຼື ການຕີຄວາມໝາຍອະນຸສັນຍາສະບັບນີ້ ຕ້ອງຖືກແກ້ໄຂດ້ວຍການເຈລະຈາ ລະຫວ່າງພາຄີຄູ່ສັນຍາ.

## ມາດຕາ 20

### ການປະເມີນຜົນ

ພາຄີຄູ່ສັນຍາຕົກລົງ ໃຫ້ມີການປະຊຸມ ຮ່ວມກັນແຕ່ລະປີ ເພື່ອປະເມີນຜົນ ແລະ ສຶກສາ ຄົ້ນຄວ້າການຈັດຕັ້ງປະຕິບັດ ອະນຸສັນຍາ ສະບັບນີ້ ໃຫ້ມີປະສິດທິຜົນ. ພາຄີຄູ່ສັນຍາ ຕົກລົງ ຜັດປ່ຽນກັນເປັນເຈົ້າພາບໃນການຈັດກອງປະຊຸມ.

## ມາດຕາ 21

### ການ ດັດແປງແກ້ໄຂ .

ການດັດແປງ, ການແກ້ໄຂ ຫຼື ການເພີ້ມເຕີມ ຂໍ້ຄວາມໃດໜຶ່ງຂອງ ອະນຸສັນຍາສະບັບນີ້ ຈະຕ້ອງໄດ້ຮັບ ການເຫັນດີຮ່ວມກັນຂອງ ພາຄີຄູ່ສັນຍາ ໂດຍເປັນລາຍລັກອັກສອນ.

## ມາດຕາ 22

## ຜົນສັກສິດ

ອະນຸສັນຍາ ສະບັບນີ້ ມີຜົນນຳໃຊ້ໄດ້ ພາຍຫຼັງ 60 ວັນ ນັບແຕ່ວັນທີ່ ລົງລາຍເຊັນເປັນຕົ້ນໄປ ແລະມີອາຍຸ ນຳໃຊ້ເປັນເວລາ ໜຶ່ງ(1)ປີ. ອະນຸສັນຍາສະບັບນີ້ ຈະມີອາຍຸຕໍ່ໄປໄດ້ໂດຍອັດຕະໂນມັດ ເປັນແຕ່ລະປີໄປ ເວັ້ນແຕ່ພາຄີຄູ່ສັນຍາຝ່າຍໃດຝ່າຍໜຶ່ງໄດ້ສະແດງເຈດຕະນາເປັນລາຍລັກອັກສອນ ປະສົງຈະຍົກເລີກ ໂດຍແຈ້ງໃຫ້ແກ່ ພາຄີຄູ່ສັນຍາ ອີກຝ່າຍໜຶ່ງຊາບ ລ່ວງໜ້າຢ່າງນ້ອຍ 3 ເດືອນ ກ່ອນວັນສິ້ນສຸດອາຍຸຂອງ ອະນຸສັນຍາສະບັບນີ້.

ເຮັດທີ່ ບາງກອກ ວັນທີ 17 ສິງຫາ 2001, ເປັນສອງຕົ້ນສະບັບ ເປັນພາສາລາວ, ພາສາໄທ ແລະ ພາສາອັງກິດ, ທຸກພາສາມີຄຸນຄ່າເທົ່າທຽມກັນ. ໃນກໍລະນີ ມີຄວາມ ແຕກຕ່າງກັນ ໃນການຕີ ຄວາມໝາຍ ຫຼື ການນຳໃຊ້ອະນຸສັນຍາສະບັບນີ້ ໃຫ້ຖືເອົາສະບັບພາສາອັງກິດເປັນຫຼັກ.

ຕາງໜ້າລັດຖະບານ
ແຫ່ງ ສາທາລະນາລັດປະຊາທິປະໄຕປະຊາຊົນ ລາວ



ບົວທອງ ວົງລໍຄຳ
ລັດຖະມົນຕີ ວ່າການ ກະຊວງຄົມມະນາຄົມ
ຂົນສົ່ງ ໄປສະນີແລະກໍ່ສ້າງ

ຕາງໜ້າລັດຖະບານ
ແຫ່ງ ລາຊະອານາຈັກໄທ



ວັນໂມຫະມັດນໍ ມະທາ
ລັດຖະມົນຕີວ່າການ ກະຊວງ ຄົມມະນາຄົມ

## ໃບຊ້ອນທ້າຍ ກ

## ສະນິດ ແລະ ປະເພດພາຫານະຂົນສົ່ງ

ພາຄີຄູ່ສັນຍາຕົກລົງກຳນົດສະນິດ ແລະ ປະເພດຂອງລົດທີ່ໃຊ້ໃນການຂົນສົ່ງ ພາຍໃຕ້ອະນຸສັນຍາສະບັບນີ້ ດັ່ງຕໍ່ໄປນີ້ :

ກ. ລົດຂົນສົ່ງສິນຄ້າ :

1. ລົດຂົນສົ່ງສິນຄ້າໃຫ້ປະຕິບັດຕາມອະນຸສັນຍາ 3 ແລະ 4 ຂອງ ກອບຂໍ້ຕົກລົງອາຊຽນວ່າດ້ວຍການອຳນວຍຄວາມສະດວກໃນການຂົນສົ່ງສິນຄ້າຜ່ານແດນທີ່ໄດ້ລົງນາມທີ່ ຮ່າໂນ້ຍເມື່ອວັນທີ 16 ທັນວາ 1998.
2. ປະເພດພາຫານະທີ່ໃຊ້ໄດ້ແກ່ :
   - + ລົດບັນທຸກດ່ຽວ ( Rigid vehicle ).
   - + ລົດລາກ ຫລື ພວງ ( Articulated vehicle or Semi-trailer ).

ໂດຍມີຂະໜາດ ແລະ ກຳນົດໝາຍເຕັກນິກ ຕາມແບບຕິດຂັດໃບຊ້ອນທ້າຍນີ້

ຂ. ລົດໂດຍສານ :

ລົດໂດຍສານໃຫ້ເປັນໄປຕາມມາດຖານສາກົນໂດຍມີບ່ອນນັ່ງບໍ່ເກີນ 45 ບ່ອນນັ່ງ.

ເອກກະສານຄັດຕິດໃບຊ້ອນທ້າຍ ກ

## ຂໍ້ກໍານົດ ກ່ຽວກັບ ຂະໜາດ ແລະ ນໍ້າໜັກພາຫານະຂົນສົ່ງ

1. ຄວາມຍາວສູງສຸດ :

   1.1 ລົດບັນທຸກດ່ຽວ ( Rigid Vehicle ) ບໍ່ເກີນ 12,20 ແມັດ.
   1.2 ລົດລາກ ຫລື ພວງ ( Articulated Vehicle or Semi-trailer ) ບໍ່ເກີນ 16,00 ແມັດ.

2. ຄວາມກ້ວາງສູງສຸດ :

   ລົດທຸກ ປະເພດ ບໍ່ເກີນ 2,50 ແມັດ .

3. ຄວາມສູງສູງສຸດ:

   ລົດທຸກປະເພດ ບໍ່ເກີນ 4,20 ແມັດ.

4. ສ່ວນທ້າຍລົດ:

   ບໍ່ເກີນ 60% ຂອງຊ່ວງ ລໍ້ໜ້າ ແລະ ຫຼັງ.

5. ນໍ້າໜັກບັນທຸກສູງສຸດ ( ເບິ່ງຮູບປະກອບ )

| | | | | | |
|---|---|---|---|---|---|
| 5.1. | ລົດບັນທຸກດ່ຽວ | 3 ເພົາ | ເພົາທ້າຍຢາງຄູ່ | ບໍ່ເກີນ | 21,00 ໂຕນ. |
| 5.2. | ລົດບັນທຸກດ່ຽວ | 4 ເພົາ | ເພົາທ້າຍຢາງຄູ່ | ບໍ່ເກີນ | 25,00 ໂຕນ. |
| 5.3. | ລົດພວງ | 4 ເພົາ | ເພົາທ້າຍຢາງຄູ່ | ບໍ່ເກີນ | 32,00 ໂຕນ. |
| 5.4. | ລົດພວງ | 5 ເພົາ | ເພົາທ້າຍຢາງຄູ່ | ບໍ່ເກີນ | 36,00 ໂຕນ. |
| 5.5. | ລົດພວງ | 6 ເພົາ | ເພົາທ້າຍຢາງຄູ່ | ບໍ່ເກີນ | 38,00 ໂຕນ. |

| TYPE OF VECHICLE | MAXIMUM PERMISSIBLE GROSS VEHICLE WEIGHT (Tonnes) |
|---|---|
|  3-Axle Rigid | 21.0 T |
|  4-Axle Rigid | 25.0 T |
|  4-Axle Articulated | 32.0 T |
|  5-Axle Articulated | 36.0 T |
|  6-Axle Articulated | 38.0 T |

S = single tyre
D = dual tyre

## ໃບຊ້ອນທ້າຍ ຂ
## ຈຸພັກເຊົາລົດ

ພາຄີຄູ່ສັນຍາຕົກລົງທີ່ຈະໃຫ້ມີການກຳນົດຈຸດພັກເຊົາລົດ ຫຼື ຈຸດຈອດລົດ , ສຳລັບພາຫານະຂົນສົ່ງພາຍໃຕ້ອະນຸສັນຍາສະບັບນີ້ ພາຍໃນດິນແດນຂອງພາຄີຄູ່ສັນຍາແຕ່ລະຝ່າຍ ດັ່ງນີ້ :

ກ. ຈຸດພັກເຊົາລົດ ແລະ/ ຫຼື ຈຸດຈອດລົດສຳລັບລົດຂົນສົ່ງສິນຄ້າ

ລົດຂົນສົ່ງສິນຄ້າຂອງ ພາຄີຄູ່ສັນຍາຕ້ອງຈອດພັກຢູ່ສະຖານີ ຫຼື ສະຖານທີ່ຊຶ່ງແຕ່ລະພາຄີຄູ່ສັນຍາຈະກຳນົດຕາມເສັ້ນທາງຂົນສົ່ງລະຫວ່າງປະເທດ ພາຍໃຕ້ມາດຕາ 8 ຂອງອະນຸສັນຍາສະບັບນີ້.

ຂ. ຈຸດພັກເຊົາລົດໂດຍສານ

ລົດໂດຍສານທີ່ໃຊ້ໃນການຂົນສົ່ງຜູ້ໂດຍສານຂ້າມແດນ ລະຫວ່າງພາຄີຄູ່ສັນຍາພາຍໃຕ້ອະນຸສັນຍາສະບັບນີ້ຕ້ອງຈອດຮັບ-ສົ່ງຜູ້ໂດຍສານຕາມຈຸດຢູ່ຕາມເສັ້ນທາງຂົນສົ່ງທີ່ ພາຄີຄູ່ສັນຍາໄດ້ຕົກລົງກັນ.